ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງນໍ້າທາ

ເຈົ້າແຂວງ

ເລກທີ 277 /ຈຂ

ຫຼວງນໍ້າທາ, ວັນທີ 23...ພຶດສະພາ..2023

# ຂໍ້ຕົກລົງ
## ວ່າດ້ວຍການພັດທະນາເຂດອຸດສາຫະກຳ
## ແລະ ນິຄົມອຸດສາຫະກຳ

- **ອີງຕາມ** ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015; ໝວດທີ 4 ມາດຕາ 19 ແລະ ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- **ອີງຕາມ** ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- **ອີງຕາມ** ມະຕິກອງປະຊຸມ ສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ II, ສະບັບເລກທີ 20/ສພຂ, ລົງວັນທີ 21 ມີນາ 2023;
- **ອີງຕາມ** ຫນັງສືສະເໜີ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ສະບັບເລກທີ 347/ພອຄ.ນທ, ລົງວັນທີ 7 ເມສາ 2022.

## ເຈົ້າແຂວງຫຼວງນໍ້າທາ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ສ້າງຂຶ້ນເພື່ອກຳນົດ ຫຼັກການ , ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ເພື່ອຈັດສັນໂຮງງານເຂົ້າມາຢູ່ໃນບໍລິເວນດຽວກັນ, ລັດມີຄວາມສະດວກໃນການວາງແຜນການນຳໃຊ້ທີ່ດິນຢ່າງມີລະບົບ, ເພື່ອສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃນການສ້າງຕັ້ງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍເຂັ້ມງວດໃນການປົກປັກຮັກສາສິ່ງແວດລ້ອມ ແລະ ສອດຄ່ອງຕາມນະໂຍບາຍ ການພັດທະນາໄປຕາມທິດສີຂຽວ ແນ່ໃສ່ສົ່ງເສີມການຜະລິດສະໜອງແກ່ການຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ, ສ້າງລາຍຮັບເຂົ້າງົບປະມານລັດປະກອບສ່ວນພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ.

**ມາດຕາ 2 ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ນິຄົມອຸດສາຫະກຳ ແມ່ນເນື້ອທີ່ດິນ ທີ່ໄດ້ພັດທະນາລະບົບພື້ນຖານໂຄງລ່າງຄົບຊຸດ ເຊັ່ນ: ຖະໜົນ, ລະບົບລະບາຍນໍ້າ, ລະບົບບຳບັດສິ່ງເສດເຫຼືອ, ລະບົບປ້ອງກັນນໍ້າຖ້ວມ, ໄຟຟ້າ, ນໍ້າປະປາ, ໂທລະຄົມມະນາຄົມ, ອາຄານ, ທີ່ຢູ່ອາໄສ, ສ້າງ ແລະ ສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ ເພື່ອຮັບໃຊ້ການດຳເນີນກິດຈະການໂຮງງານອຸດສາຫະກຳ.

ການພັດທະນາເຂດອຸດສາຫະກຳ ແມ່ນເຂດພື້ນທີ່ດິນໄດ້ສະຫງວນໄວ້ ຫຼື ຈັດສັນໄວ້ສຳລັບການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ຫຼື ກິດຈະການອື່ນ ດຳເນີນກິດຈະການໂຮງງານການຜະລິດ, ການປຸງແຕ່ງ, ການບໍລິການ ແລະ ອື່ນໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ເຂດອຸດສາຫະກຳ ໝາຍເຖິງ:** ເຂດພື້ນທີ່ດິນ, ທີ່ໄດ້ສະຫງວນໄວ້ ຫຼື ຈັດສັນໄວ້ສຳລັບການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ຫຼື ກິດຈະການອື່ນ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳ ທີ່ໄດ້ຮັບການຮັບຮອງຢ່າງເປັນທາງການ ຈາກອົງການປົກຄອງແຂວງ;
2. **ນິຄົມອຸດສາຫະກຳ ໝາຍເຖິງ:** ເນື້ອທີ່ດິນກ້ວາງຂວາງທີ່ໄດ້ພັດທະນາລະບົບພື້ນຖານໂຄງລ່າງຄົບຊຸດ ເຊັ່ນ: ເສັ້ນທາງ, ລະບົບລະບາຍນ້ຳ, ລະບົບບຳບັດສິ່ງເສດເຫຼືອ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ອາຄານ, ທີ່ຢູ່ອາໄສ, ສາງ ແລະ ສິ່ງອຳນວຍຄວາມສະດວກອື່ນໆທີ່ຈຳເປັນ ເພື່ອຮັບໃຊ້ການດຳເນີນກິດຈະການໂຮງງານອຸດສາຫະກຳ ທີ່ດຳເນີນການຜະລິດຈຳໜ່າຍຢູ່ພາຍໃນ ແລະ ສົ່ງອອກ;
3. **ນິຄົມອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກ ໝາຍເຖິງ:** ອຸດສາຫະກຳທີ່ດຳເນີນການຜະລິດເພື່ອການສົ່ງອອກສະເພາະ ຫຼື ເອີ້ນວ່າ ເຂດອຸດສາຫະກຳປຸງແຕ່ງ ເພື່ອການສົ່ງອອກ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 30 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ;
4. **ຜູ້ພັດທະນາ ໝາຍເຖິງ:** ຜູ້ລົງທຶນພັດທະນາທຸກຄົນ, ນິຕິບຸກຄົນ ພື້ນຖານໂຄງລ່າງໃນເນື້ອທີ່ ທີ່ກຳນົດເປັນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ເພື່ອໃຫ້ມີສິ່ງອຳນວຍຄວາມສະດວກຄົບຊຸດ ເປັນຕົ້ນ: ປັບໜ້າດິນໃຫ້ຮາບພຽງ, ສ້າງເສັ້ນທາງພາຍໃນນິຄົມອຸດສາຫະກຳ ແລະ ເຊື່ອມຈອດກັບພາຍນອກ, ຕິດຕັ້ງລະບົບໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມສື່ສານ;
5. **ຜູ້ລົງທຶນ ໝາຍເຖິງ:** ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດການລົງທຶນ ແລະ ຈົດທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ ໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ.

**ມາດຕາ 4 ຫຼັກການກ່ຽວກັບຄຸ້ມຄອງ ການພັດທະນາເຂດອຸດສາຫະກາ ແລະ ເຂດນິຄົມອຸດສາຫະກຳ**

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນແຕ່ໄລຍະ ແລະ ຖືກຕ້ອງຕາມ ກົດໝາຍ, ລະບຽບການ;
2. ແມ່ນການກຳນົດຄຸນລັກສະນະທາງດ້ານມາດຕະຖານເຕັກນິກ ຂອງໂຮງງານອຸດສາຫະກຳປຸງແຕ່ງ ເປັນຕົ້ນ ທີ່ຕັ້ງໂຮງງານ, ອາຄານ, ເຄື່ອງຈັກ ແລະ ອຸປະກອນ, ຄວາມປອດໄພ, ສຸຂະອະນາໄມ, ສິ່ງແວດລ້ອມ ແລະ ລະບົບການຄຸ້ມຄອງບໍລິຫານໂຮງງານ;
3. ແນ່ໃສ່ໃຫ້ມີການສົ່ງເສີມການຜະລິດພາຍໃນ ແລະ ສົ່ງອອກຕ່າງປະເທດ ເພື່ອເປັນການສ້າງລາຍຮັບເຂົ້າໃນງົບປະມານຂອງລັດ ເປັນການປະກອບສ່ວນພັດທະນາເສດກິດ-ສັງຄົມ ໃຫ້ຂະຫຍາຍຕົວຕໍ່ເນື່ອງ ແລະ ຍືນຍົງ;
4. ຮັບປະກັນຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສະເໝີພາບຕໍ່ໜ້າກົດໝາຍ ແລະ ສາມາດກວດສອບໄດ້.

**ມາດຕາ 5 ນະໂຍບາຍຂອງແຂວງກ່ຽວກັບວຽກງານພັດທະນາເຂດອຸດສາຫະກາ ແລະ ເຂດນິຄົມອຸດສາຫະກຳ**

ນອກຈາກຈະໄດ້ຮັບນະໂຍບາຍຕາມລະບຽບການແລ້ວ, ແຂວງຊຸກຍູ້ ແລະ ສົ່ງເສີມການພັດທະນຳເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ຕາມລະບຽບການ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດກ່ຽວກັບການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໃນຂອບເຂດພາຍໃນແຂວງ.

## ໝວດທີ II
## ການກຳນົດເຂດການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ

**ມາດຕາ 7 ການກຳນົດເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕ້ອງເປັນເຂດມີພື້ນທີ່ດິນ, ທີ່ລັດໄດ້ສະຫງວນໄວ້ ຫຼື ດິນເອກະຊົນ ທີ່ມີເນື້ອທີ່ ກວ້າງຂວາງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ມີການພັດທະນາເສັ້ນທາງ, ລະບົບໄຟຟ້າ, ລະບົບບຳບັດສິ່ງເສດເຫຼືອ, ຈັດການລະອຽດ ເພື່ອຮອງຮັບໃນການສ້າງຕັ້ງໂຮງງານ ແລະ ບໍລິການອື່ນໆ;

ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕ້ອງມີໄລຍະຫ່າງຈາກຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທຳ, ເຂດປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ ແລະ ເຂດອານຸລັກຊີວະນາໆພັນ;

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນເຈົ້າການ ໂດຍສົມທົບກັບອົງການປົກຄອງແຂວງ, ອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ສຶກສາຄົ້ນຄວ້າ, ຄັດເລືອກ, ກຳນົດຂອບເຂດດິນທີ່ເໝາະສົມ ແລະ ປັກຫຼັກໝາຍຈຸດທີ່ຕັ້ງຂອບເຂດບໍລິເວນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ແລ້ວສະເໜີຕໍ່ເຈົ້າແຂວງ ອອກຂໍ້ຕົກລົງຮັບຮອງເປັນເຂດການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຂອງແຂວງຫຼວງນ້ຳທາ ແລ້ວລາຍງານກະຊວງອຸດສາຫະກຳ ແລະ ການຄ້າຮັບຊາບ;

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນເຈົ້າການໃນການສ້າງແຜນແມ່ບົດພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ, ຂຶ້ນແຜນຊົດເຊີຍ-ເວນຄືນ ຂອບເຂດພື້ນທີ່ກຳນົດ ເພື່ອພັດທະນາດ້ານພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອຮອງຮັບການລົງທຶນສ້າງຕັ້ງໂຮງງານ ແລະ ກິດຈະການສະໜັບສະໜູນອື່ນໆ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ.

**ມາດຕາ 8 ການລົງທຶນໃນການພັດທະນາເຂດອຸດສາຫະກາ ແລະ ນິຄົມອຸດສາຫະກາ**

ການລົງທຶນໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບການລົງທຶນຢູ່ເຂດທົ່ວໄປ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ພາຍໃຕ້ການຄຸ້ມຄອງຂອງຂະແໜງອຸດສາຫະກຳ ແລະ ການຄ້າ;

ການລົງທຶນໃນເຂດການພັດທະນາອຸດສາຫະກຳ ໄດ້ຮັບນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ III
## ປະເພດ ແລະ ຮູບແບບ

**ມາດຕາ 9 ປະເພດການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ປະກອບມີ 2 ປະເພດຄື:

1. ການພັດທະນາເຂດນິຄົມອຸດສາຫະກຳທົ່ວໄປ;
2. ການພັດທະນາເຂດນິຄົມອຸດສາຫະກຳປຸງແຕ່ງ ເພື່ອການສົ່ງອອກ;

**ມາດຕາ 10 ຮູບແບບພັດທະນາ**

ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ປະກອບມີ 4 ຮູບແບບຄື:

1. ການພັດທະນາໂດຍລັດຮ້ອຍສ່ວນຮ້ອຍ;

2. ການພັດທະນາຮ່ວມ ລະຫວ່າງ ລັດ ກັບ ລັດ;
3. ການພັດທະນາຮ່ວມ ລະຫວ່າງ ລັດ ກັບ ເອກະຊົນ;
4. ການພັດທະນາຮ່ວມໂດຍເອກະຊົນຮ້ອຍສ່ວນຮ້ອຍ.

**ມາດຕາ 11 ການພັດທະນາໂດຍລັດຮ້ອຍສ່ວນຮ້ອຍ**

ການພັດທະນາໂດຍລັດຮ້ອຍສ່ວນຮ້ອຍ ແມ່ນລັດຖະບານເປັນຜູ້ສະໜອງທຶນທັງໝົດ ໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ແລະ ຄຸ້ມຄອງບໍລິຫານໂດຍການຈັດຕັ້ງລັດ ຕາມກົນໄກການສ້າງຕັ້ງ ແລະ ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການພັດທະນາຮ່ວມລະຫວ່າງລັດກັບລັດ**

ການພັດທະນາຮ່ວມ ລະຫວ່າງ ລັດ ກັບ ລັດ ແມ່ນການລົງທຶນຮ່ວມກັນ ລະຫວ່າງ ລັດຖະບານລາວ ກັບ ລັດຖະບານຕ່າງປະເທດ ເພື່ອພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍກຳນົດສິດ ແລະ ພັນທະຂອງແຕ່ລະຝ່າຍ ໃນສັນຍາການຮ່ວມມື.

**ມາດຕາ 13 ການພັດທະນາຮ່ວມລະຫວ່າງລັດກັບເອກະຊົນ**

ການພັດທະນາຮ່ວມ ລະຫວ່າງ ລັດ ກັບ ເອກະຊົນ ແມ່ນການລົງທຶນຮ່ວມກັນ ລະຫວ່າງ ລັດຖະບານລາວ ກັບ ຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ເພື່ອການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍກຳນົດສິດ ແລະ ພັນທະຂອງແຕ່ລະຝ່າຍໃນສັນຍາການຮ່ວມມື.

**ມາດຕາ 14 ການພັດທະນາ ໂດຍເອກະຊົນຮ້ອຍສ່ວນຮ້ອຍ**

ການພັດທະນາໂດຍເອກະຊົນຮ້ອຍສ່ວນຮ້ອຍ ແມ່ນການລົງທຶນ ເພື່ອພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຂອງເອກະຊົນພາຍໃນ ຫຼື ເອກະຊົນຕ່າງປະເທດ ຫຼື ການຮ່ວມທຶນ ລະຫວ່າງ ເອກະຊົນພາຍໃນກັບຕ່າງປະເທດ ຊຶ່ງບໍ່ມີການລົງທຶນຮ່ວມຂອງລັດຖະບານ.

## ໝວດທີ IV
## ເງື່ອນໄຂ, ການພັດທະນາສ້າງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ

**ມາດຕາ 15 ເງື່ອນໄຂການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ສາມາດລົງທຶນພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳໄດ້ ຕາມປະເພດ, ຮູບແບບ ແລະ ຕາມເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີເນື້ອທີ່ດິນ 5 ເຮັກຕາ ຂຶ້ນໄປ ສ່ວນນິຄົມອຸດສາຫະກຳແມ່ນຕ້ອງມີເນື້ອທີ່ດິນຢ່າງຕ່ຳ 30 ເຮັກຕາຂຶ້ນໄປ ໂດຍມີເອກະສານສິດນຳໃຊ້ທີ່ດິນເປັນຂອງຕົນເອງ ຫຼື ເອກະສານອະນຸຍາດເຊົ່າ, ສຳປະທານ ຫຼື ສິດນຳໃຊ້ທີ່ດິນຂອງລັດ, ທີ່ຕັ້ງຢູ່ໃນ ຫຼື ນອກເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍສອດຄ່ອງກັບແຜນພັດທະນາຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ-ເມືອງໃນແຕ່ລະໄລຍະ;
2. ຜູ້ພັດທະນາຕ້ອງມີຖານະການເງິນທີ່ເຂັ້ມແຂງໃນການພັດທະນາອຸດສາຫະກຳ ແລະ ສ່ວນນິຄົມອຸດສາຫະກຳຕ້ອງມີແຫຼ່ງທຶນຢ່າງຕ່ຳ 50 ຕື້ກີບ ຂຶ້ນໄປ ໂດຍໄດ້ຮັບການກວດກາ ແລະ ຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ເພື່ອນຳໃຊ້ການພັດທະນາພື້ນຖານໂຄງລ່າງ;
3. ມີວັດຖຸປະສົງຈະແຈ້ງ ແລະ ກຳນົດອາຍຸການພັດທະນາທີ່ຊັດເຈນ ເໝາະສົມ ຕາມແຕ່ລະຂະໜາດເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ;
4. ມີລະບົບບຳບັດນ້ຳເສຍ, ມາດຕະການກຳຈັດສິ່ງເສດເຫຼືອ ແລະ ມາດຕະການດ້ານສິ່ງແວດລ້ອມຕາມມາດຕະຖານສາກົນ.

**ມາດຕາ 16 ການພັດທະນາການສ້າງຕັ້ງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກາ**

ການພັດທະນາການສ້າງຕັ້ງເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ສາມາດພັດທະນາຢູ່ໃນ ຫຼື ນອກເຂດນິຄົມອຸດສາຫະກໍາກໍ່ໄດ້ ໂດຍສອດຄ່ອງກັບແຜນພັດທະນາຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ເມືອງໃນແຕ່ລະໄລຍະ.

ຜູ້ມີຈຸດປະສົງຢາກພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ໃຫ້ປະຕິບັດ ດັ່ງນີ້:

1. ໃນກໍລະນີຕ້ອງການສໍາປະທານທີ່ດິນລັດ ໃຫ້ນໍາສະເໜີຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ຕາມເງື່ອນໄຂ ແລະ ຂັ້ນຕອນ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ພາຍຫຼັງສໍາເລັດຂັ້ນຕອນການສໍາປະທານແລ້ວ ຈຶ່ງສະເໜີຕໍ່ພະແນກອຸດສາຫະກໍາ ແລະ ການຄ້າ ນໍາສະເໜີຕໍ່ອົງການປົກຄອງແຂວງ ເພື່ອອອກຂໍ້ຕົກລົງໃຫ້ມີການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ, ສ້າງຕັ້ງການຈັດຕັ້ງຄຸ້ມຄອງ ຕາມກົນໄກການຄຸ້ມຄອງເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ;
2. ກໍລະນີບໍ່ມີການສໍາປະທານດິນລັດ ສະເໜີແຂວງ ແລະ ພະແນກອຸດສາຫະກໍາ ແລະ ການຄ້າ, ກະຊວງອຸດສາຫະກໍາ ແລະ ການຄ້າ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາ ຕາມເງື່ອນໄຂ ແລະ ຕາມຂັ້ນຕອນທີ່ໄດ້ກໍານົດໃນຂໍ້ຕົກລົງສະບັບນີ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ເອກະສານປະກອບ**

ເອກະສານປະກອບໃນການສະເໜີຂໍພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ສະເໜີຫາຂະແໜງອຸດສາຫະກໍາ ແລະ ການຄ້າ, ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ອົງການປົກຄອງແຂວງ ມີດັ່ງນີ້:

1. ໃບຄໍາຮ້ອງຂໍພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ຕາມແບບພິມທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ກໍານົດ;
2. ສໍາເນົາໃບອະນຸຍາດການລົງທຶນ (ກໍລະນີສໍາປະທານດິນລັດ);
3. ສໍາເນົາໃບທະບຽນວິສາຫະກິດ;
4. ແຜນພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ແລະ ບົດວິພາກເສດຖະກິດ-ເຕັກນິກ;
5. ເອກະສານສິດນໍາໃຊ້ທີ່ດິນ ທີ່ສະເໜີພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ;
6. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ;
7. ໃບຢັ້ງຢືນຖານະການເງິນ.

**ມາດຕາ 18 ການພິຈາລະນາຕໍ່ການສະເໜີຂໍການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ**

ຂະແໜງອຸດສາຫະກໍາ ແລະ ການຄ້າແຂວງ ເປັນເຈົ້າການຄົ້ນຄວ້າການສະເໜີຂໍພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ໂດຍສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນໍາສະເໜີລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ພິຈາລະນາອອກຂໍ້ຕົກລົງສ້າງຕັ້ງເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ.

**ມາດຕາ 19 ການຄຸ້ມຄອງ ແລະ ການບໍລິການການລົງທຶນໃນການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ**

ການຄຸ້ມຄອງ ແລະ ການບໍລິການການລົງທຶນໃນການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ, ດໍາລັດວ່າດ້ວຍເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ, ຂໍ້ຕົກລົງວ່າດ້ວຍນິຄົມອຸດສາຫະກໍາ, ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຂະແໜງອຸດສາຫະກໍາ ແລະ ການຄ້າແຂວງ ພິຈາລະນາ ແລະ ນໍາສະເໜີອົງການປົກຄອງແຂວງ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອສ້າງຕັ້ງຫ້ອງການຄຸ້ມຄອງບໍລິຫານການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາຂຶ້ນ ຕາມຄວາມເໝາະສົມ ແລະ ຄວາມຈໍາເປັນ ເພື່ອຕາງໜ້າ ຫຼື ເປັນຕົວແທນໃຫ້ພາກລັດໃນການຄຸ້ມຄອງບໍລິຫານການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ;

ຂະແໜງອຸດສາຫະກໍາ ແລະ ການຄ້າ, ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງບໍລິຫານການພັດທະນາເຂດອຸດສາຫະກໍາ ແລະ ນິຄົມອຸດສາຫະກໍາ, ມີໜ່ວຍງານບໍລິການປະຕູດຽວ ເປັນຕົ້ນ

ການອອກໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດດຳເນີນກິດຈະການໂຮງງານ ແລະ ໃບຢັ້ງຢືນການນຳເຂົ້າ-ສົ່ງອອກ.

## ໝວດທີ V
## ສິດ ແລະ ພັນທະຂອງຜູ້ພັດທະນາ ແລະ ຂອງຜູ້ລົງທຶນ

**ມາດຕາ 20 ສິດ ຂອງຜູ້ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ຜູ້ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້, ກົດໝາຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຕາມກົດໝາຍ ແລະ ລະບຽບການ;
3. ເປັນເຈົ້າກຳມະສິດຕໍ່ຊັບສິນ ທີ່ຕົນໄດ້ພັດທະນາການລົງທຶນ ແລະ ນະໂຍບາຍຕ່າງໆ ຕາມກົດໝາຍກຳນົດ;
4. ນຳໃຊ້ທີ່ດິນຂອງຕົນ ຫຼື ນຳໃຊ້ທີ່ດິນທີ່ໄດ້ເຊົ່າ ແລະ ສຳປະທານ ຕາມສັນຍາການພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ລວມທັງການຈັດສັນຕອນດິນ ໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ເພື່ອພັດທະນາໄປຕາມແຜນການທີ່ກຳນົດໄວ້ ຫຼື ບົດວິພາກເສດຖະກິດ-ເຕັກນິກທີ່ໄດ້ຮັບຮອງ;
6. ໄດ້ຮັບສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ພັນທະ ຂອງຜູ້ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ຜູ້ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ມີພັນທະ ດັ່ງນີ້:

1. ສ້າງຕັ້ງບໍລິສັດ ເພື່ອດຳເນີນໂຄງການຕາມສັນຍາພັດທະນາ;
2. ນຳທຶນເຂົ້າມາພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມຈຳນວນ ແລະ ໄລຍະເວລາທີ່ກຳນົດໄວ້;
3. ຄຸ້ມຄອງບໍລິຫານທຸລະກິດ,ໂຄສະນາ ແລະ ດຶງດູດການລົງທຶນເຂົ້າໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ;
4. ມີສ່ວນຮ່ວມ ຫຼື ປະກອບສ່ວນໃນການພັດທະນາຊຸມຊົນເຂດບ້ານໃກ້ຄຽງກັບເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມຄວາມສາມາດ ແລະ ຕາມຄວາມເໝາະສົມ;
5. ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ສາມາດສະໜອງການບໍລິການໃຫ້ແກ່ການລົງທຶນພາຍໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ;
6. ຖືບັນຊີຕາມກົດໝາຍວ່າດ້ວຍບັນຊີ ໃນກໍລະນີຈຳເປັນສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການເງິນ;
7. ມອບພັນທະພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມກົດໝາຍ ແລະ ລະບຽບການກຳນົດໃຫ້ລັດຄົບຖ້ວນ ແລະ ທັນຕາມກຳນົດ;
8. ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ລັດ ໃນການຄຸ້ມຄອງຕິດຕາມການລົງທຶນໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ແລະ ລາຍງານຄວາມຄືບໜ້າໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ, ອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ຂັ້ນເທິງຮັບຊາບປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ.
9. ປະຕິບັດວຽກອື່ນໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້, ກົດໝາຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
2. ໄດ້ຮັບການສົ່ງເສີມ ແລະ ອຳນວຍຄວາມສະດວກໃນການລົງທຶນກິດຈະການ ຕາມທີ່ໄດ້ກຳນົດໄວ້ກົດໝາຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກລົງທຶນຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
4. ນຳໃຊ້ທີ່ດິນຕາມສັນຍາລົງທຶນກິດຈະການ ໂດຍສອດຄອງກັບກົດໝາຍ ແລະ ລະບຽບການ;
5. ເປັນເຈົ້າກຳມະສິດ ຕໍ່ຊັບສິນໃນການລົງທຶນກິດຈະການຂອງຕົນ;
6. ຄຸ້ມຄອງບໍລິຫານ ແລະ ດຳເນີນທຸລະກິດຕາມແຜນການທີ່ກຳນົດ ຫຼື ບົດວິພາກເສດຖະກິດ-ເຕັກນິກທີ່ໄດ້ຮັບຮອງ;
7. ໂອນເງິນທີ່ໄດ້ຮັບຈາກການດຳເນີນທຸລະກິດອອກນອກປະເທດ ໂດຍສອດຄອງຕາມຂັ້ນຕອນຂອງກົດໝາຍ ແລະ ບຽບການກຳນົດ;
8. ໄດ້ຮັບສິດອື່ນໆ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 23 ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ມີພັນທະ ດັ່ງນີ້:

1. ນຳທຶນເຂົ້າມາລົງທຶນພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມຈຳນວນ ແລະ ໄລຍະເວລາທີ່ກຳນົດໄວ້;
2. ສ້າງເງື່ອນໄຂ ຫຼື ກົນໄກໃນການຍົກລະດັບສີມືແຮງງານລາວ ໂດຍສະເພາະແຮງງານໃນຂອບເຂດພື້ນທີ່ຂອບເຂດໃກ້ຄຽງສາມາດເຂົ້າເຮັດວຽກໃນໂຮງງານຂອງຕົນເອງໄດ້;
3. ວາງແຜນ ແລະ ເອົາໃຈໃສ່ພັດທະນາສີມືແຮງງານ ຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມໃນແຕ່ລະໄລຍະ;
4. ປະຕິບັດພັນທະຕ່າງໆ ໂດຍສະເພາະ ພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ ກຳນົດໄວ້, ໃຫ້ລັດຄົບຖ້ວນ ແລະ ທັນຕາມກຳນົດ;
5. ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ລັດໃນການຄຸ້ມຄອງຕິດຕາມການລົງທຶນ ໃນເຂດພັດທະນານິຄົມອຸດສາຫະກຳ ແລະ ລາຍງານຄວາມຄືບໜ້າໃນການລົງທຶນໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ, ອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າຮັບຊາບປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ;
6. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ນະໂຍບາຍສົ່ງເສີມການພັດທະນາ ແລະ ການລົງທຶນ

**ມາດຕາ 24 ນະໂຍບາຍຕໍ່ຜູ້ພັດທະນາເຂດອຸດສາຫະກາ ແລະ ນິຄົມອຸດສາຫະກາ**

ແຂວງມີນະໂຍບາຍເປີດກ້ວາງ ແລະ ຊຸກຍູ້ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມປະເພດທີ່ໄດ້ກຳນົດໄວ້

ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອສ້າງເງື່ອນໄຂສະດວກໃນການດຳເນີນທຸລະກິດດ້ານອຸດສາຫະກຳປຸງແຕ່ງ ແລະ ກິດຈະການສະໜັບສະໜູນ;

ຜູ້ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໄດ້ຮັບນະໂຍບາຍຍົກເວັ້ນພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມທີ່ກຳນົດໄວ້ໃນສັນຍາຮ່ວມມື ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບຜູ້ພັດທະນາ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ບົດລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 ນະໂຍບາຍຕໍ່ການລົງທຶນໃນການພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ**

ການລົງທຶນໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໄດ້ຮັບການອຳນວຍຄວາມສະດວກ ແລະ ໄດ້ຮັບນະໂຍບາຍສະເພາະຕາມປະເພດຂອງການລົງທຶນ ທີ່ໄດ້ກຳນົດຢູ່ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

ຜູ້ລົງທຶນໃນການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ມີສິດຮັບຮູ້ຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍ ແລະ ລະບຽບການຄຸ້ມຄອງນິຄົມອຸດສາຫະກຳ ຢ່າງເປີດເຜີຍ ຊຶ່ງແຕ່ລະເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕ້ອງມີລະບຽບການສະເພາະໃນການຄຸ້ມຄອງບໍລິຫານ ໂດຍແທດເໝາະກັບສະພາບເງື່ອນໄຂຈຸດພິເສດຂອງແຕ່ລະເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ.

**ມາດຕາ 26 ການຂໍອະນຸຍາດລົງທຶນ ແລະ ການນຳໃຊ້ທີ່ດິນ ໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ**

ການຂໍອະນຸຍາດລົງທຶນໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ສາມາດປະກອບເອກະສານ ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ, ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍປະກອບເອກະສານຕາມແບບພິມ ທີ່ກຳນົດ;

ຜູ້ພັດທະນາ ເປັນຜູ້ຈັດສັນເນື້ອທີ່ດິນໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍແບ່ງອອກເປັນຕອນ ແລະ ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນເປັນແຕ່ລະຕອນ ເພື່ອໃຫ້ຜູ້ລົງທຶນເຊົ່າ ຫຼື ຊື້ສິດນຳໃຊ້ດັ່ງກ່າວ ຕາມກຳນົດເວລາ ທີ່ກຳນົດໄວ້ໃນສັນຍາພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳດັ່ງກ່າວ.

## ໝວດທີ VII
## ອົງການຄຸ້ມຄອງເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ

**ມາດຕາ 27 ອົງການຄຸ້ມຄອງເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງເປັນເຈົ້າການປະສານສົມທົບກັບອົງການປົກຄອງແຂວງ, ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ.

ອົງການຄຸ້ມຄອງການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ປະກອບມີ ດັ່ງນີ້:

1. ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
2. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ;
3. ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ (ເຂດນິຄົມອຸດສາຫະກຳຕັ້ງຢູ່).

**ມາດຕາ 28 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງ, ການສ້າງຕັ້ງ ແລະ ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານສົ່ງເສີມ ແລະ ຄຸ້ມຄອງການພັດທະນາເຂດອຸດສາຫະກຳ ແລະນິຄົມອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;

2. ຄົ້ນຄວ້າ ແລະ ປະກອບບຸກຄະລາກອນຂອງຕົນ ຫຼື ພິຈາລະນາພະນັກງານຂັ້ນເມືອງ ເຂົ້າໃນຫ້ອງການຄຸ້ມຄອງບໍລິຫານເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ບົນພື້ນຖານການມອບໝາຍ ແລະ ຄວາມເປັນເອກະພາບນຳກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງແຂວງ;
3. ຄົ້ນຄວ້າ ແລະ ພິຈາລະນາໃນການອະນຸມັດເອກະສານຂໍລົງທຶນ, ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງສະເພາະເຂດທີ່ບໍ່ທັນມີຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ;
4. ຊຸກຍູ້, ຕິດຕາມ ແລະ ກວດກາການພັດທະນາ, ການດຳເນີນງານຂອງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ແລະ ການດຳເນີນກິດຈະການຂອງໂຮງງານທີ່ຕັ້ງຢູ່ໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ເພື່ອໃຫ້ດຳເນີນຖືກຕ້ອງຕາມແຜນການທີ່ໄດ້ອະນຸຍາດ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສາຍຕັ້ງ ແລະ ສາຍຂວາງ ເພື່ອຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໃຫ້ມີປະສິດທິຜົນ;
6. ລາຍງານສະພາບການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໃຫ້ອົງການປົກຄອງແຂວງ, ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
7. ມີສິດສະເໜີຫາກະຊວງ ອຸດສາຫະກຳ ແລະ ການຄ້າໃນການຍົກເລີກສັນຍາກັບຜູ້ພັດທະນາ ແລະ ຜູ້ລົງທຶນ ທີ່ບໍ່ປະຕິບັດຕາມລະບຽບກົດໝາຍ ຂອງ ສປປ ລາວ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງກັບ ແລະ ພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງມີ ດັ່ງນີ້:**

1. ຈັດຕັ້ງຜັນຂະຫຍາຍວຽກງານສົ່ງເສີມ ແລະ ຄຸ້ມຄອງການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳຊ່ວຍພະແນກອຸດສາຫະກຳ ແລະ ການຄ້າ ແລະ ຂັ້ນເທິງ;
2. ຄົ້ນຄວ້າ ແລະ ປະກອບບຸກຄະລາກອນຂອງຕົນ ເພື່ອປະກອບເຂົ້າໃນຫ້ອງການຄຸ້ມຄອງບໍລິຫານເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ບົນພື້ນຖານຄວາມເປັນເອກະພາບ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ອົງການປົກຄອງແຂວງ;
3. ເຂົ້າຮ່ວມການຊຸກຍູ້, ຕິດຕາມ ແລະ ກວດກາການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນແຕ່ລະໄລຍະ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ.

**ມາດຕາ 30 ສິດ ແລະ ໜ້າທີ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ປະຕິບັດສິດ ແລະ ໜ້າທີ່ ຕາມພາລະບົດບາດ, ສິດຂອບເຂດຄວາມຮັບຜິດຊອບຂອງຂະແໜງຕົນ ແລະ ສອດຄ່ອງຕາມລະບຽບກົດໝາຍກຳນົດໄວ້.

**ມາດຕາ 31 ອົງການກວດກາ**

ອົງການກວດກາ ພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ປະກອບມີ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງການພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ເຊິ່ງປະກອບດ້ວຍ ສະພາປະຊາຊົນແຂວງ, ອົງການກວດກາລັດຂັ້ນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ  ສື່ມວນຊົນ;

ອົງການກວດກາພາຍນອກມີສິດ ແລະ ໜ້າທີ່ກວດກາ ຕາມພາລະບົດບາດຂອງຕົນຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 32 ເນື້ອໃນກວດກາ**

ກວດກາການພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳຮອບດ້ານ, ກວດກາດ້ານສິ່ງແວດລ້ອມ, ກວດກາສະພາບເຕັກນິກຂອງອາຄານໂຮງງານ, ການຕິດຕັ້ງເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ຄວາມປອດໄພແຮງງານ ແລະ ການນຳໃຊ້ແຮງງານ, ກວດກາຜະລິດຕະພັນໂຮງງານ, ກວດກາລະບົບ ກຳຈັດ ແລະ ບຳບັດສິ່ງເສດເຫຼືອ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງການປະຕິບັດສິດ ແລະ ພັນທະຂອງຜູ້ພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ຕາມກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

**ມາດຕາ 33 ຮູບການກວດກາ**

ການກວດກາການພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ໄດ້ກຳນົດເປັນສາມຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນກວດກາ ຕາມແຜນການຢ່າງເປັນປະຈຳ ແລະ ມີເວລາກຳນົດອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນດຳເນີນຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ ແລະ ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ VIII
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີສ່ວນຮ່ວມທຸກຮູບແບບ;
2. ຮັບສິນບົນ, ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;
3. ເມີນເສີຍຕໍ່ການລາຍງານຂອງບຸກຄົນ, ນິຕິບຸກຄົນ ກ່ຽວກັບການເຄື່ອນໄຫວທີ່ບໍ່ຖືກຕ້ອງລະບຽບກົດໝາຍຂອງ ສປປ ລາວ ພາຍໃນເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ;
4. ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດ ລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 35 ຂໍ້ຫ້າມສາລັບຜູ້ພັດທະນາ**

ຫ້າມຜູ້ພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ດັ່ງນີ້:

1. ຫ້າມພັດທະນາເຂດອຸດສາຫະກຳ ແລະ ເຂດນິຄົມອຸດສາຫະກຳ ເປັນບ່ອນຜະລິດຢາເສບຕິດ ຜິດຕໍ່ລະບຽບ ຂອງ ສປປ ລາວ;
2. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບການອະນຸຍາດຂອງແໜງອຸດສາຫະກຳ ແລະ ການຄ້າ;
3. ປອມແປງເອກະສານ, ປົກບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ກ່ຽວຂ້ອງ;
4. ປ່ຽນຊື່ໂຄງການ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຄງການໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
5. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມລະບຽບການ.

**ມາດຕາ 36 ຂໍ້ຫ້າມສາລັບຜູ້ລົງທຶນ**

ຫ້າມສຳລັບຜູ້ລົງທຶນພາຍໃນເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ດັ່ງນີ້:

1. ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ;
2. ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ;
3. ໃຫ້ສິນບົນ;
4. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ;
5. ນຳວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານທີ່ບໍ່ຖືກຕ້ອງຕາມກົດໝາຍເຂົ້າໂຮງງານ;
6. ນຳເຂົ້າ ຫຼື ນຳໃຊ້ທາດເຄມີອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
7. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ໊ອ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ໃຫ້ຢຸດເຊົາການເຄື່ອນໄຫວ;
8. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານໂດຍບໍ່ໄດ້ຮັບອະນຸຍາດຈາກກະແໜງການອຸດສາຫະກຳ ແລະ ການຄ້າ;
9. ປອມແປງເອກະສານ, ປິດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ກ່ຽວຂ້ອງ;
10. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມລະບຽບການ;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 37 ຂໍ້ຫ້າມສຳລັບບຸກຄົນທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ມີພຶດຕິກຳ ດັ່ງນີ້:

1. ຫ້າມຈັບຈອງພື້ນທີ່ດິນໃນເຂດດັ່ງກ່າວໂດຍທົ່ວໄປ;
2. ຫ້າມປຸກສ້າງເຮືອນຊານ ຫຼື ສິ່ງປຸກສ້າງອື່ນໆທີ່ໃກ້ກັບເຂດດິນອຸດສາຫະກຳ ແລະ ນິຄົມອຸດສາຫະກຳ, ສິ່ງປຸກສ້າງນັ້ນຕ້ອງໃຫ້ຫ່າງຈາກເຂດອຸດສາຫະກຳແລະ ນິຄົມອຸດສາຫະກຳ 1 ກິໂລແມັດ;
3. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບການໃນການພັດທະນາເຂດ ແລະ ເຂດນິຄົມອຸດສາຫະກຳ;
4. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ

**ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວດີເດັ່ນ ໃນວຽກງານເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ສິ່ງເສີມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ບຽບການ.

**ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຄົມບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວລະເມີດຕໍ່ເນື້ອໃນຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດມາດຕະການທາງວິໄນ, ປັບໃໝທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ໂດຍປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງ 15 ວັນນັບແຕ່ວັນທີພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ວຽງສະຫວັດ ສີພັນດອນ